ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----===)000(===----

ກະຊວງການເງິນ

ເລກທີ 1302/ກງ

ນະຄອນຫລວງວຽງຈັນ, ວັນທີ 22 APR 2016

# ບົດແນະນຳ

## ກ່ຽວກັບ ການຈຳໜ່າຍພັນທະບັດ ເພື່ອລະດົມແຫຼ່ງທຶນສະສົມ ຂອງກະຊວງການເງິນ

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 27 ກຸມພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ.
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 259/ນຍ, ລົງວັນທີ 01 ມິຖຸນາ 2010 ວ່າດ້ວຍຄັງເງິນແຫ່ງຊາດ.
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 3266/ກງ, ລົງວັນທີ 28 ກັນຍາ 2015 ວ່າດ້ວຍການຈຳໜ່າຍພັນທະບັດ ເພື່ອລະດົມທຶນສະສົມນຳໃຊ້ເພື່ອຊຳລະພັນທະບັດ ກະຊວງການເງິນທີ່ຄົບກຳນົດ.

ລັດຖະມົນຕີວ່າການກະຊວງການເງິນ ອອກບົດແນະນຳ:

### I. ຈຸດປະສົງ ແລະ ລະດັບຄາດໝາຍ

#### 1.1. ຈຸດປະສົງ:

ບົດແນະນຳສະບັບນີ້ ເປັນບ່ອນອີງໃນການກຳນົດ ວິທີການ, ຂັ້ນຕອນໃນການຈຳໜ່າຍ ແລະ ການຊຳລະຕົ້ນທຶນ ພັນທະບັດທີ່ຄົບກຳນົດ ໃຫ້ຖືກຕ້ອງຕາມລະບຽບຫຼັກການ, ແນໃສ່ເຮັດໃຫ້ການຄຸ້ມຄອງພັນທະບັດ ມີປະສິດທິຜົນ, ໄຖ່ຖອນຕົ້ນທຶນ ໄດ້ທັນຕາມກຳນົດເວລາ, ຊ່ວຍໜູນງົບປະມານແຫ່ງລັດ ໃຫ້ມີຄວາມຄ່ອງຕົວ ແລະ ຮັກສາຄວາມເຊື່ອໝັ້ນ ໃຫ້ຜູ້ລົງທຶນຊື້ພັນທະບັດ ຂອງກະຊວງການເງິນ.

#### 1.2. ລະດັບຄາດໝາຍ:

- ຊຳລະ ຕົ້ນທຶນພັນທະບັດຂອງກະຊວງການເງິນ ໃຫ້ສະຖາບັນການເງິນ ຫຼື ທະນາຄານ, ຊຶ່ງເປັນຜູ້ຖືຄອງທຳອິດ (ບໍ່ມີການປ່ຽນມື) ເມື່ອຄົບກຳນົດ ຕ້ອງຮັບປະກັນຊຳລະຕົ້ນທຶນ ໃຫ້ຄົບຖ້ວນ ແລະ ທັນຕາມກຳນົດເວລາ.
- ສ້າງຄວາມເຊື່ອໝັ້ນ ໃຫ້ສະຖາບັນການເງິນ ຫຼື ທະນາຄານ, ຊຶ່ງຜູ້ລົງທຶນ ຊື້ພັນທະບັດ ຂອງກະຊວງການເງິນ.
- ມີແຫຼ່ງທຶນສະສົມສ່ວນໜຶ່ງ ເພື່ອນຳໃຊ້ການດຸ່ນດ່ຽງງົບປະມານ ເມື່ອງົບປະມານແຫ່ງລັດ ຂາດສະພາບຄ່ອງ.
- ຮັກສາໄດ້ສະຖຽນລະພາບທາງດ້ານການເງິນ-ເງິນຕາຂອງຊາດ ໃຫ້ມີຄວາມໝັ້ນຄົງ ແລະ ຍືນຍົງ

## II. ການຈໍາໜ່າຍ ແລະ ການອອກ ພັນທະບັດ

ການຈໍາໜ່າຍພັນທະບັດຂອງກະຊວງການເງິນ ເປົ້າໝາຍຕົ້ນຕໍແມ່ນ ລະດົມແຫຼ່ງທຶນສະສົມ ເອີ້ນຫຍໍ້ວ່າ "ພັນທະບັດ ລະດົມແຫຼ່ງທຶນສະສົມ" ແມ່ນເອກະສານທີ່ມີຄ່າທາງດ້ານການເງິນ ອອກໂດຍກະຊວງການເງິນ, ມີຈຸດປະສົງ ເພື່ອລະດົມແຫຼ່ງທຶນສະສົມ ນໍາໃຊ້ເພື່ອຊໍາລະພັນທະບັດກະຊວງການເງິນທີ່ຄົບກໍານົດ ແລະ ດຸ່ນດ່ຽງງົບປະມານ ເມື່ອງົບປະມານຂາດສະພາບຄ່ອງ, ຊຶ່ງກະຊວງການເງິນ ມີພັນທະໃນການຊໍາລະຕົ້ນທຶນ ໃຫ້ຜູ້ຖືຄອງທໍາອິດ ຕາມທີ່ໄດ້ກໍານົດໄວ້ ຢູ່ໃນພັນທະບັດກະຊວງການເງິນ ເມື່ອຄົບກໍານົດໄຖ່ຖອນ.

### 2.1. ຂັ້ນຕອນ ການຈໍາໜ່າຍ:

ກະຊວງການເງິນ ປະສານສົມທົບ ກັບທະນາຄານ ແຫ່ງ ສປປ ລາວ ກໍານົດອັດຕາດອກເບ້ຍແບບຄົງທີ່ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ ຂອງເສດຖະກິດມະຫາພາກ ໃນແຕ່ລະໄລຍະ.

ກະຊວງການເງິນ ແຈ້ງໃຫ້ທະນາຄານ ແຫ່ງ ສປປ ລາວ ກ່ຽວກັບວົງເງິນສະເໜີປະມູນຈໍາໜ່າຍແຕ່ລະຄັ້ງຮັບຊາບລ່ວງໜ້າກ່ອນການປະມູນ ບົນພື້ນຖານອັດຕາດອກເບ້ຍແບບຄົງທີ່ ຢ່າງໜ້ອຍ 15 ວັນ.

ທະນາຄານ ແຫ່ງ ສປປ ລາວ ເປັນຜູ້ດໍາເນີນການປະມູນ ພັນທະບັດຂອງກະຊວງການເງິນ ຕາມຂັ້ນຕອນແບບເປີດເຜີຍ, ໂປ່ງໃສ, ຊື່ສັດ ແລະ ຍິນຍອມປະຕິບັດ ຕາມພັນທະໃນການຊໍາລະສະສາງ ທັງຜູ້ຊື້ ແລະ ຜູ້ຂາຍ. ມື້ເປີດຊອງປະມູນ ທະນາຄານແຫ່ງ ສປປ ລາວ ອອກໜັງສືເຊີນ ຄັງເງິນແຫ່ງຊາດ ເຂົ້າຮ່ວມການປະມູນ ແລະ ຮັບຮູ້ຢັ້ງຢືນ ຜົນການປະມູນພັນທະບັດຂອງກະຊວງການເງິນ.

### 2.2. ການອອກພັນທະບັດ :

ທະນາຄານ ແຫ່ງ ສປປ ລາວ ແຈ້ງໃຫ້ຜູ້ຊະນະການປະມູນຮັບຊາບ ແລະ ໃຫ້ຊໍາລະຄ່າພັນທະບັດ ຂອງກະຊວງການເງິນ ດ້ວຍການໂອນເງິນເຂົ້າບັນຊີເງິນຝາກບ້ວງຂາຍພັນທະບັດລະດົມແຫຼ່ງທຶນສະສົມ ແລະ ສະເໜີໃຫ້ຄັງເງິນແຫ່ງຊາດ ອອກພັນທະບັດໃໝ່ ໃຫ້ຜູ້ຊະນະການປະມູນ ໂດຍຄັດຕິດຜົນການປະມູນ ແລະ ເອກະສານຢັ້ງຢືນການຊື້ພັນທະບັດ (ໃບແຈ້ງມີ).

ເອກະສານຢັ້ງຢືນການຊື້ພັນທະບັດ (ໃບແຈ້ງມີ), ທະນາຄານ ແຫ່ງ ສປປ ລາວ ສົ່ງໃຫ້ຄັງເງິນແຫ່ງຊາດໜ່ວຍງານທະນາຄານ ພະແນກບໍລິການ ເພື່ອເປັນເອກະສານຢັ້ງຢືນ ການຂາຍພັນທະບັດລະດົມແຫຼ່ງທຶນສະສົມ ແລະ ບັນທຶກຈົດກ່າຍບັນຊີ. ສ່ວນຈໍານວນເງິນ ທີ່ຂາຍພັນທະບັດລະດົມແຫຼ່ງທຶນສະສົມ ໃຫ້ລວມສູນໄວ້ຢູ່ບັນຊີຄັງເງິນແຫ່ງຊາດ ທີ່ເປີດ ແລະ ເຄື່ອນໄຫວ ຢູ່ກົມບໍລິການ ທະນາຄານ ແຫ່ງ ສປປ ລາວ (ໝາຍເລກບັນຊີ 000 000 000 011 0108).

ການອອກພັນທະບັດ ລະດົມແຫຼ່ງທຶນສະສົມ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1) ທະນາຄານ ແຫ່ງ ສປປ ລາວ ສະເໜີຄັງເງິນແຫ່ງຊາດ ກະກຽມອອກໃບພັນທະບັດໃໝ່ ໃຫ້ຜູ້ຊື້ພັນທະບັດ.
2) ຄັງເງິນແຫ່ງຊາດ ປະກອບເອກະສານ ເພື່ອລາຍງານທ່ານລັດຖະມົນຕີວ່າການກະຊວງການເງິນ ອອກຂໍ້ຕົກລົງອະນຸມັດ ແລະ ລົງລາຍເຊັນໃສ່ ໃບພັນທະບັດໃໝ່.
3) ຄັງເງິນແຫ່ງຊາດ ນໍາສົ່ງພັນທະບັດໃໝ່ ໃຫ້ທະນາຄານ ແຫ່ງ ສປປ ລາວ ເພື່ອນໍາສົ່ງຕໍ່ໃຫ້ຜູ້ຊື້ພັນທະບັດ.
4) ບັນທຶກບັນຊີຕາມລັກສະນະເນື້ອໃນ ຈາກການຂາຍພັນທະບັດ ເຂົ້າໃນລະບົບ GFIS ຕາມລະບຽບການ.

## III. ການນຳໃຊ້ເງິນ, ການຊຳລະ ຕົ້ນທຶນ ແລະ ດອກເບ້ຍ :

### 3.1 ການນຳໃຊ້ເງິນ :

ຈຳນວນເງິນ ທີ່ໄດ້ຈາກການຂາຍພັນທະບັດລະດົມແຫຼ່ງທຶນສະສົມ ໃຫ້ນຳໃຊ້ຕາມເປົ້າໝາຍ ດັ່ງນີ້:

1) ຊຳລະຕົ້ນທຶນ ພັນທະບັດຂອງກະຊວງການເງິນ ທີ່ຄົບກຳນົດ, ຊຶ່ງໄດ້ຈຳໜ່າຍ ຜ່ານທະນາຄານ ແຫ່ງ ສປປ ລາວ ທີ່ຕິດຕາມ ຢູ່ລະບົບບັນຊີຂອງຄັງເງິນແຫ່ງຊາດ ລວມທັງມີໃນແຜນງົບປະມານປະຈຳປີ ແລະ ພັນທະບັດທີ່ກະຊວງການເງິນອອກໄປຮອດກຳນົດ ຕ້ອງຊຳລະໃນຊ່ວງປີງົບປະມານຕາມລຳດັບ ໂດຍແມ່ນຫົວໜ້າຄັງເງິນແຫ່ງຊາດ ຫຼື ຜູ້ໄດ້ຮັບມອບສິດ ເປັນຜູ້ສັ່ງຈ່າຍເງິນ ຈາກບັນຊີຄັງເງິນແຫ່ງຊາດ ທີ່ເປີດ ແລະ ເຄື່ອນໄຫວ ຢູ່ກົມບໍລິການທະນາຄານ ແຫ່ງ ສປປ ລາວ (ໝາຍເລກບັນຊີ 000 000 000 011 0108).
2) ໃນກໍລະນີ ງົບປະມານແຫ່ງລັດ ຂາດສະພາບຄ່ອງ ໃຫ້ນຳໃຊ້ເງິນຂາຍພັນທະບັດລະດົມແຫຼ່ງທຶນສະສົມ ສູງສຸດບໍ່ໃຫ້ເກີນ 40% ຂອງມູນຄ່າທີ່ຈຳໜ່າຍພັນທະບັດໄດ້ໃນແຕ່ລະຄັ້ງ.

### 3.2 ການຊຳລະ ຕົ້ນທຶນ ແລະ ດອກເບ້ຍ:

ເປົ້າໝາຍການຊຳລະຕົ້ນທຶນພັນທະບັດທີ່ຄົບກຳນົດ ຕົ້ນຕໍເລັ່ງໃສ່ພັນທະບັດທີ່ກະຊວງການເງິນ ອອກໃຫ້ສະຖາບັນການເງິນ ຫຼື ທະນາຄານ, ຊຶ່ງໄດ້ລະດົມແຫຼ່ງທຶນເຂົ້າງົບປະມານໂດຍກົງ, ໝາຍຄວາມວ່າ ມີແຕ່ຜູ້ຖືຄອງພັນທະບັດຂອງກະຊວງການເງິນທຳອິດເທົ່ານັ້ນ, ໃນກໍລະນີອື່ນ ກະຊວງການເງິນ ຈະຄົ້ນຄວ້າພິຈາລະນາ ເປັນກໍລະນີສະເພາະ.

ຂັ້ນຕອນການຊຳລະຕົ້ນທຶນພັນທະບັດ ໃຫ້ປະຕິບັດ ດັ່ງນີ້:

1) ກ່ອນມື້ ພັນທະບັດຂອງກະຊວງການເງິນທີ່ຄົບກຳນົດ 30 ວັນ, ໃຫ້ກະຊວງການເງິນ (ກົມງົບປະມານ ແລະ ຄັງເງິນແຫ່ງຊາດ) ຂຶ້ນແຜນຊຳລະ ພັນທະບັດທີ່ຄົບກຳນົດ ແລະ ໃຫ້ທະນາຄານ ແຫ່ງ ສປປ ລາວ ແຈ້ງໃຫ້ຜູ້ຖືຄອງພັນທະບັດຂອງກະຊວງການເງິນ (ທຳອິດ) ສະເໜີຂໍຊຳລະຕົ້ນທຶນພັນທະບັດ, ເອກະສານຊ້ອນທ້າຍຕ່າງໆ ຄັດຕິດໃບພັນທະບັດທີ່ຄົບກຳນົດ ແລະ ເລກບັນຊີເງິນຝາກຂອງຕົນຢູ່ທະນາຄານ ທີ່ຈະໃຫ້ຄັງເງິນແຫ່ງຊາດ ໂອນເງິນຊຳລະຕົ້ນທຶນ ພັນທະບັດທີ່ຄົບກຳນົດ.
2) ຄັງເງິນແຫ່ງຊາດ ຮັບໃບສະເໜີຊຳລະຕົ້ນທຶນພັນທະບັດທີ່ຄົບກຳນົດ ຄັດຕິດໃບພັນທະບັດ ແລະ ເອກະສານຊ້ອນທ້າຍຕ່າງໆ ໃຫ້ປະຕິບັດ ດັ່ງນີ້:
   - ກວດກາໃບພັນທະບັດ (ດ້ວຍຕາເປົ່າ ຫຼື ເຄື່ອງຈັກກວດ), ກວດເບິ່ງບັດປະຈຳຕົວ ແລະ ເອກະສານທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງຕາມລະບຽບການ;
   - ປະກອບເອກະສານ ຊຳລະຕົ້ນທຶນພັນທະບັດທີ່ຄົບກຳນົດ ຕາມລະບຽບການ;
   - ໂອນເງິນເຂົ້າບັນຊີເງິນຝາກຂອງຜູ້ຖືຄອງພັນທະບັດ ຜ່ານລະບົບທະນາຄານ.
3) ຄັງເງິນແຫ່ງຊາດ ບັນທຶກບັນຊີ ຕາມລັກສະນະເນື້ອໃນການຊຳລະຕົ້ນທຶນພັນທະບັດ ໃນລະບົບ GFIS ຕາມລະບຽບການ.

ສ່ວນການຊຳລະດອກເບ້ຍພັນທະບັດ ໃນແຕ່ລະຄັ້ງ, ຄັງເງິນແຫ່ງຊາດ ສະເໜີກົມງົບປະມານແຫ່ງລັດ ອອກຄຳສັ່ງຈ່າຍ ເພື່ອຊຳລະຕາມລະບຽບການ ແລະ ອີງໃສ່ແຜນງົບປະມານ ປະຈຳແຕ່ລະສົກປີ.

## IV. ການບັນທຶກຈິດກ່າຍບັນຊີ

### 1. ຮັບເງິນຈາກການຂາຍພັນທະບັດ ເຂົ້າບັນຊີເງິນຝາກບ້ວງຂາຍພັນທະບັດລະດົມແຫຼ່ງທຶນສະສົມ

- ຂັ້ນຕອນທີ 1:

ໜ່ວຍງານທະນາຄານພະແນກບໍລິການ ຮັບໃບແຈ້ງມີ ຂາຍພັນທະບັດ ລົງບັນຊີຕິດຕາມດັ່ງນີ້:

# ຈິດໜີ້ບັນຊີ: 551100.00.00110108 *(ເງິນຝາກທະນາຄານບ້ວງຂາຍພັນທະບັດ)*

# ຈິດມີບັນຊີ: 592550.00.00 *(ໜ່ວຍງານບັນຊີເງິນຝາກ ພົວພັນ ກັບ ໜ່ວຍງານທະນາຄານ).*

- ຂັ້ນຕອນທີ 2:

ໜ່ວຍງານຄຸ້ມຄອງບັນຊີເງິນຝາກຄັງເງິນພະແນກບໍລິການ ລົງບັນຊີຕິດຕາມໜີ້ຕ້ອງສົ່ງ ດັ່ງນີ້:

# ຈິດໜີ້ບັນຊີ: 592550.00.00 *(ໜ່ວຍງານບັນຊີເງິນຝາກ ພົວພັນ ກັບ ໜ່ວຍງານທະນາຄານ)*

# ຈິດມີ ບັນຊີ: 171110.00.174000 *(ພັນທະບັດລະດົມທຶນ)*

### 2. ຊຳລະຕົ້ນທຶນພັນທະບັດ ໄຖ່ຖອນໂດຍກົງເມື່ອຄົບກຳນົດ

- ຂັ້ນຕອນທີ 1:

ໜ່ວຍງານທະນາຄານ ພະແນກບໍລິການ ຮັບໃບແຈ້ງມີຈາກການຂາຍພັນທະບັດ ລົງບັນຊີຕິດຕາມ ດັ່ງນີ້:

# ຈິດໜີ້ບັນຊີ: 592550.00.00 *(ໜ່ວຍງານບັນຊີເງິນຝາກ ພົວພັນ ກັບ ໜ່ວຍງານທະນາຄານ)*

# ຈິດມີບັນຊີ: 551100.00.00110108 *(ເງິນຝາກທະນາຄານບ້ວງຂາຍພັນທະບັດ)*

- ຂັ້ນຕອນທີ 2:

ໜ່ວຍງານຄຸ້ມຄອງບັນຊີເງິນຝາກຄັງເງິນພະແນກບໍລິການລົງບັນຊີຕິດຕາມ ໜີ້ຕ້ອງສົ່ງ ດັ່ງນີ້:

# ຈິດໜີ້ບັນຊີ: 171110.00.109250 *(ພັນທະບັດລະດົມແຫຼ່ງທຶນສະສົມ)*

# ຈິດມີບັນຊີ: 592550.00.00 *(ໜ່ວຍງານບັນຊີເງິນຝາກ ພົວພັນ ກັບ ໜ່ວຍງານທະນາຄານ)*

### 3. ການບັນທຶກບັນຊີ ໃນກໍລະນີນຳໃຊ້ 40% ເພື່ອດຸ່ນດ່ຽງງົບປະມານ

ກໍລະນີນຳໃຊ້ເງິນ ຈາກການຂາຍພັນທະບັດລະດົມແຫຼ່ງທຶນສະສົມ ບໍ່ເກີນ 40% ຂອງມູນຄ່າທີ່ຈຳໜ່າຍພັນທະບັດ ເຂົ້າໃນການດຸ່ນດ່ຽງງົບປະມານ, ໃຫ້ໜ່ວຍງານທະນາຄານພະແນກບໍລິການ ເຄື່ອນເງິນຈາກ ບັນຊີຂາຍພັນທະບັດ ເຂົ້າບັນຊີເງິນຝາກຄັງເງິນບ້ວງງົບປະມານ ຢູ່ ທະນາຄານແຫ່ງ ສປປ ລາວ ລົງບັນຊີຕິດຕາມ ດັ່ງນີ້:

#ຈິດໜີ້ ບັນຊີ: 551100.00.00140102 *(ເງິນຝາກຄັງເງິນບ້ວງງົບປະມານ ຢູ່ ທະນາຄານແຫ່ງ ສປປ ລາວ)*

# ຈິດມີ ບັນຊີ: 551100.00.00110108 *(ເງິນຝາກທະນາຄານບ້ວງຂາຍພັນທະບັດ)*

## V. ຄວາມຮັບຜິດຊອບ

### 1. ກະຊວງການເງິນ:

- ຕາງໜ້າໃຫ້ແກ່ລັດຖະບານ ອອກພັນທະບັດລະດົມແຫຼ່ງທຶນສະສົມ ແລະ ເປັນເຈົ້າການຕິດຕາມ ຍອດພັນທະບັດ ທີ່ໄດ້ອອກຈຳໜ່າຍ ຜ່ານທະນາຄານ ແຫ່ງ ສປປ ລາວ ພ້ອມທັງສົມທຽບ ຕົວເລກຍອດພັນທະບັດ ເປັນແຕ່ລະ ເດືອນ, ງວດ ແລະ ປີ.

- ຄິດໄລ່ ແລະ ສ້າງແຜນຄາດຄະເນງົບປະມານ ໃນການອອກພັນທະບັດລະດົມແຫຼ່ງທຶນສະສົມ ເພື່ອຊໍາລະຕົ້ນທຶນ ແລະ ດອກເບ້ຍ ພັນທະບັດຂອງກະຊວງການເງິນທີ່ຄົບກໍານົດ ແລະ ດຸ່ນດ່ຽງງົບປະມານ.
- ຮັບປະກັນການຊໍາລະຕົ້ນທຶນ ແລະ ດອກເບ້ຍ ພັນທະບັດຂອງກະຊວງການເງິນ ໃຫ້ທັນຕາມກໍານົດເວລາ.

**2. ທະນາຄານແຫ່ງ ສປປ ລາວ**

- ດໍາເນີນການປະມູນ ພັນທະບັດຂອງກະຊວງການເງິນ ແລະ ແຈ້ງຕອບຜົນການປະມູນ ໃຫ້ຜູ້ຊື້ພັນທະບັດ ແລະ ກະຊວງການເງິນ ຮັບຊາບໃນແຕ່ລະໄລຍະ.
- ປະສານສົມທົບ ກັບກະຊວງການເງິນ ແລະ ຜູ້ຊື້ພັນທະບັດ ກ່ຽວກັບຂັ້ນຕອນ ການຈໍາໜ່າຍ, ການປະມູນ ແລະ ການຊໍາລະຕົ້ນທຶນພັນທະບັດທີ່ຄົບກໍານົດ.
- ດໍາເນີນການສະສາງບັນຊີ ລະຫວ່າງ ກະຊວງການເງິນ ແລະ ຜູ້ຊື້ພັນທະບັດ ຢູ່ທະນາຄານ ແຫ່ງ ສປປ ລາວ.

## VI. ມາດຕະການ:

ຜູ້ຊື້ພັນທະບັດ ບໍ່ສາມາດຍົກເລີກໃບສະເໜີຊື້ພັນທະບັດຂອງຕົນ ທີ່ໄດ້ຮັບການປະກາດວ່າການສະເໜີຊື້ດັ່ງກ່າວສໍາເລັດ. ໃນກໍລະນີ ບໍ່ປະຕິບັດການຊໍາລະຄ່າພັນທະບັດຂອງກະຊວງການເງິນ ທີ່ເປັນຜົນສະທ້ອນເຖິງການຈັດຕັ້ງປະຕິບັດງົບປະມານແຫ່ງລັດ, ຜູ້ຊື້ພັນທະບັດ ຈະຖືກປັບໄໝ 5% ຂອງຈໍານວນເງິນທີ່ຖືກຍົກເລີກ ເພື່ອມອບເຂົ້າເປັນລາຍຮັບງົບປະມານແຫ່ງລັດ.

ກະຊວງການເງິນ ເປັນເຈົ້າການ ຊອກແຫຼ່ງທຶນຊໍາລະຕົ້ນທຶນ ແລະ ດອກເບ້ຍພັນທະບັດ ຂອງກະຊວງການເງິນທີ່ຄົບກໍານົດ ໃຫ້ແກ່ຜູ້ຖືຄອງພັນທະບັດມີທໍາອິດ. ໃນກໍລະນີ ບໍ່ສາມາດຊໍາລະຕົ້ນທຶນທັນຕາມກໍານົດເວລາ ກະຊວງການເງິນ ຕ້ອງຈ່າຍດອກເບ້ຍຕາມອັດຕາທີ່ໄດ້ກໍານົດໄວ້ໃນໃບພັນທະບັດ ແລະ ຈໍານວນເວລາ ທີ່ຊໍາລະຊ້າ.

## VII. ການຈັດຕັ້ງປະຕິບັດ

ມອບໃຫ້ ຫ້ອງການກະຊວງການເງິນ, ຄັງເງິນແຫ່ງຊາດ, ກົມງົບປະມານແຫ່ງລັດ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງເຜີຍແຜ່, ແນະນໍາ ໃຫ້ຜູ້ຮັບຜິດຊອບ ຄຸ້ມຄອງ ແລະ ຈໍາໜ່າຍພັນທະບັດ ຂອງກະຊວງການເງິນ, ບັນດາ ສະຖາບັນການເງິນ, ທະນາຄານ ແລະ ກອງທຶນອື່ນໆ ທີ່ສົນໃຈລົງທຶນຊື້ພັນທະບັດ ໃຫ້ເຂົ້າໃຈ ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສໍາເລັດ ຕາມລະດັບຄາດໝາຍ.

ກົມງົບປະມານແຫ່ງລັດ, ຄັງເງິນແຫ່ງຊາດ ແລະ ທະນາຄານ ແຫ່ງ ສປປ ລາວ ສ້າງກົນໄກປະສານງານ, ມອບຄວາມຮັບຜິດຊອບ ແລະ ສະຫຼຸບລາຍງານ ຜົນການຈັດຕັ້ງປະຕິບັດ ໃຫ້ຄະນະນໍາກະຊວງການເງິນຮັບຊາບ ໃນແຕ່ລະໄລຍະ.

ບົດແນະນໍາສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງການເງິນ

ດຣ ລຽນ ທິແກ້ວ